ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈໍາ

ເລກທີ 07/ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 12 ມັງກອນ 2017

# ມະຕິ

## ຂອງ ຄະນະປະຈໍາສະພາແຫ່ງຊາດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍການໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລາວ-ຫວຽດນາມ ແລະ ອະນຸສັນຍາວ່າດ້ວຍ ເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນ ລາວ-ຫວຽດນາມ

-------------------

- ອີງຕາມລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈໍາສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ.
- ອີງຕາມໜັງສືສະເໜີຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 83/ນຍ, ລົງວັນທີ 15 ກັນຍາ 2016.
- ອີງຕາມການຕົກລົງ ຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 21 ທັນວາ 2016.

**ຄະນະປະຈໍາສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສົນທິສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລາວ-ຫວຽດນາມ ແລະ ອະນຸສັນຍາວ່າດ້ວຍ ເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນ ລາວ-ຫວຽດນາມ ຕາມການສະເໜີຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານ

ປານີ ຢາທໍ່ຕູ້